ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການນຳເຂົ້າ ແລະ ສົ່ງອອກ

1129
ເລກທີ............../ກຂອ.ບຂອ
ນະຄອນຫຼວງວຽງຈັນ, ວັນທີ ...17.... ມີນາ 2017

# ສະໂນດນຳສົ່ງ

ຮຽນ: - ທ່ານ ປະທານສະມາຄົມອຸດສາຫະກຳປຸງແຕ່ງໄມ້ສຳເລັດຮູບແຫ່ງຊາດລາວ.
- ທ່ານ ປະທານສະມາຄົມເຟີນີເຈີລາວ.

ກົມການນຳເຂົ້າ ແລະ ສົ່ງອອກ (ກົມ ຂອ) ຂໍນຳສົ່ງເອກະສານມີດັ່ງລຸ່ມນີ້:

| ລ/ດ | ເນື້ອໃນ | ຈຳນວນ | ໝາຍເຫດ |
|---|---|---|---|
| 01 | ອີງຕາມ ການແຈ້ງເຊີນ ພະແນກອຸດສາຫະກຳ ແລະ ການຄ້າແຂວງຊຽງຂວາງ(ຄະນະສະເພາະກິດ) ສະບັບເລກທີ 325/ອຄ.ຊຂ, ລົງວັນທີ 15 ມີນາ 2017 ເລື່ອງ: ເຊີນເຂົ້າຮ່ວມປະມູນຊື້ໄມ້ (ຮ່ອງໄມ້ຍຶດຂອງແຂວງຊຽງຂວາງ ທີ່ທ້ອນໂຮມໄວ້ຢູ່ສະໜາມ II)<br><br>(ເອກະສານຄັດຕິດມາພ້ອມ) | 01 ຊຸດ | ເພື່ອເປັນຂໍ້ມູນແຈ້ງໃຫ້ສະມາຊິກທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນ ຕາມທາງຄວນດ້ວຍ. |

ດ້ວຍຄວາມນັບຖືຢ່າງສູງ,

ຫົວໜ້າກົມ

ສົມເດັດ ສີທາວົງ

ຕິດຕໍ່ພົວພັນ:
ທ. ເພັດສົມພູ ກິອົນມາ
020. 55499071

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ
ພະແນກອຸດສາຫະກຳ ແລະ ການຄ້າ
(ຄະນະສະເພາະກິດ)

ເລກທີ..325.../ອຄ.ຊຂ
ຊຽງຂວາງ, ວັນທີ..15...ມີນາ..2017

# ແຈ້ງການເຊີນ

ເຖິງ: ສະມາຄົມອຸດສາຫະກຳປຸງແຕ່ງໄມ້ແຫ່ງຊາດ, ບັນດາໂຮງງານປຸງແຕ່ງໄມ້, ທຸລະກິດໄມ້ ໃນຂອບເຂດທົ່ວປະເທດ.
ເລື່ອງ: ເຊີນເຂົ້າຮ່ວມປະມູນຊື້ໄມ້ (ຮ່ອງໄມ້ຍຶດຂອງແຂວງຊຽງຂວາງທີ່ທ້ອນໂຮມໄວ້ຢູ່ສະໜາມ II).

- ອີງຕາມ: ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 930/ຫສນຍ, ລົງວັນທີ 5 ກໍລະກົດ 2016 ວ່າດ້ວຍການແກ້ໄຂພົນຂອງການກວດກາ ການຂຸດຄົ້ນໄມ້-ທ້ອນໂຮມໄມ້ ແລະ ສົ່ງອອກໄມ້ ຢູ່ແຂວງຊຽງຂວາງ.
- ອີງຕາມ: ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 415/ຫສນຍ, ລົງວັນທີ 18/8/2016 ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ເພື່ອແກ້ໄຂພົນຂອງການກວດກາ ການຂຸດຄົ້ນໄມ້-ທ້ອນໂຮມໄມ້ ແລະ ສົ່ງອອກໄມ້ ຢູ່ແຂວງ ຊຽງຂວາງ.
- ອີງຕາມ: ຂໍ້ຕົກລົງຂອງທ່ານເຈົ້າແຂວງຊຽງຂວາງສະບັບເລກທີ 189/ຈຂ.ຊຂ, ລົງວັນທີ 15/03/2017 ວ່າດ້ວຍການຍຶດໄມ້ ແລະ ປັບໃໝ ບັນດາໂຮງງານປຸງແຕ່ງໄມ້ ທີ່ຂຸດຄົ້ນເກີນອະນຸຍາດ ຢູ່ເມືອງ ໜອກ.

ຄະນະສະເພາະກິດ ແກ້ໄຂໄມ້ຢູ່ແຂວງຊຽງຂວາງ ຂໍຖືເປັນກຽດແຈ້ງເຊີນມາຍັງ ບັນດາ ສະມາຄົມອຸດສາຫະກຳປຸງແຕ່ງໄມ້ສຳເລັດຮູບແຫ່ງຊາດ, ສະມາຄົມເຟີນີເຈີລາວ, ບັນດາໂຮງງານປຸງແຕ່ງໄມ້, ທຸລະກິດໄມ້ໃນຂອບເຂດທົ່ວປະເທດ ເພື່ອເຂົ້າຮ່ວມປະມູນຊື້ໄມ້ ຍຶດຂອງແຂວງຊຽງຂວາງ ລະອຽດມີດັ່ງນີ້:

1. ໄມ້ຢູ່ສະໜາມ 2, ເມືອງໜອກ, ແຂວງຊຽງຂວາງ ລວມມີ 28 ສະໜາມ (28ບັນຊີໄມ້).
2. ຈຳນວນໄມ້ທັງໝົດມີ 8.293 ທ່ອນ, ລວມບໍລິມາດ 21.356,872 ແມັດກ້ອນ, ເຊິ່ງເປັນໄມ້ຄຸ້ມຄອງ 1, 2, 3 (ລາຍລະອຽດແຕ່ລະບັນຊີ, ຊະນິດໄມ້, ສະໜາມໄມ້ ໃຫ້ຜູ້ສົນໃຈປະສານນຳຄະນະກຳມະການສະເພາະກິດ ໂທ: 020 96064888, 020 22224289, 020 55402781).
3. ການປະມູນແມ່ນຈະໄດ້ເຮັດເປັນແຕ່ລະບັນຊີ (ຂາຍຍົກເປັນແຕ່ລະບັນຊີ ບໍ່ໃຫ້ເລືອກ ຫຼື ແຍກເອົາໄມ້ຢູ່ໃນສະໜາມດຽວກັນ).
4. ຜູ້ທີ່ສົນໃຈໃຫ້ມາພົວພັນຊື້ຊອງປະມູນໄດ້ທີ່ຫ້ອງປະຊຸມໃຫຍ່ ພະແນກກະສິກຳ ແລະ ປ່າໄມ້ແຂວງຊຽງຂວາງ (ຄະນະສະເພາະກິດ) ໃນໂມງລັດຖະການ ກຳນົດ 15 ວັນ. (ນັບແຕ່ວັນທີ 16-30 ເດືອນ ມີນາ ປີ 2017).

5. ກະລຸນາຖືຊອງປະມູນໄວ້ກັບຕົນເອງ ຈົນຮອດເວລາ 9:00 ໂມງເຊົ້າ ຂອງວັນທີ 31/03/2017 ຈຶ່ງມາຍື່ນຊອງປະມູນໃຫ້ຄະນະກຳມະການປະມູນ ທີ່ຫ້ອງປະຊຸມໃຫຍ່ພະແນກກະສິກຳ ແລະ ປ່າໄມ້ແຂວງຊຽງຂວາງຖ້າກາຍຖືວ່າສະຫຼະສິດ.

6. ມື້ເປີດຊອງປະມູນແມ່ນວັນທີ 31/03/2017, ເວລາ 10ໂມງເຊົ້າ ຢູ່ທີ່ຫ້ອງປະຊຸມໃຫຍ່ ພະແນກ ກະສິກຳ ແລະ ປ່າໄມ້ແຂວງຊຽງຂວາງ.

7. ລາຄາຊອງປະມູນ 1.000.000 ກີບ/ຊອງ (ສຳລັບຄ່າຊອງປະມູນແມ່ນບໍ່ໄດ້ສົ່ງຄືນ).

8. ເງື່ອນໄຂ ຂອງຜູ້ເຂົ້າຮ່ວມການປະມູນ: ຕ້ອງເປັນໂຮງງານປຸງແຕ່ງໄມ້ ຫຼື ໂຮງງານເຟີນີເຈີຢູ່ ສປປລາວ ທີ່ມີທະບຽນວິສາຫະກິດ, ໃບທະບຽນອາກອນ, ໃບອະນຸຍາດດຳເນີນທຸລະກິດດ້ານການຜະລິດ ແລະ ປຸງແຕ່ງໄມ້ທີ່ຖືກຕ້ອງຕາມລະບຽບກົດໝາຍ, ມີໃບຢັ້ງຢືນຖານະການເງິນຢູ່ ສປປລາວ, ມີປະຫວັດການດຳເນີນທຸລະກິດຈະແຈ້ງ.

9. ຜູ້ຊະນະການປະມູນ ຕ້ອງໄດ້ ຈ່າຍເງິນຄ້ຳປະກັນ 10% ຂອງມູນຄ່າຊະນະການປະມູນ ພາຍໃນກຳນົດເວລາ 5 ວັນນັບແຕ່ມື້ເປີດຊອງປະມູນເປັນຕົ້ນໄປ, ສ່ວນທີ່ຍັງເຫຼືອ ໃຫ້ຊຳລະສຳເລັດ ພາຍໃນກຳນົດເວລາ 15 ວັນ ນັບແຕ່ມື້ເຮັດສັນຍາຊື້-ຂາຍນຳລັດ ແລະ ໄດ້ຈົດທະບຽນຊັບສິນສຳເລັດ.

10. ຄະນະສະເພາະກິດ ຈະອຳນວຍຄວາມສະດວກ ໃຫ້ຜູ້ຊະນະການປະມູນ ໃນການເຄື່ອນຍ້າຍໄມ້ໄປເຖິງໂຮງງານ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອເຂົ້າຮ່ວມປະມູນຊື້-ຂາຍໄມ້ຢຶດ ຕາມກຳນົດເວລາຂ້າງເທິງດ້ວຍ.

ຫົວໜ້າພະແນກ
(ຄະນະສະເພາະກິດ)

ທອງສະຫວັດ ມັງໜໍແມກ
Thongsavath MANGNOMEK